ທ່ານໄດ້ຮັບບັດສັກຢາວັກຊີນປ້ອງພະຍາດໂຄວິດຂອງທ່ານ: *ແລ້ວດຽວນີ້ໃຊ້ແນວໃດ?*



ເມື່ອທ່ານໄດ້ຮັບການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19, ເອົາບັດສັກຢາວັກຊີນຂອງທ່ານໄປເປັນຫຼັກຖານ. ຮັກສາໃຫ້ມັນປອດໄພ! ທ່ານຕ້ອງຮັກສາມັນເໝືອນກັບທ່ານຮັກສາບັນດາບັດເຄຼດິດ, ໃບຂັບຂີ່ ຫຼື ປຶ້ມຜ່ານແດນຂອງທ່ານ. ບັດຂອງທ່ານບໍ່ແມ່ນພຽງແຕ່ໃຊ້ເພື່ອເຕືອນການກຳນົດເວລາເທົ່ານັ້ນ: ມັນມີບັນທຶກຢ່າງເປັນທາງການທີ່ທ່ານອາດຈະຕ້ອງການ ສຳລັບການເດີນທາງ, ການເຂົ້າເຖິງງານຕ່າງໆ ແລະ ອາດຈະໃຊ້ເປັນບ່ອນອີງໃນສັກຢາເຕີ່ມໃນເວລາຕໍ່ມາ.

ຫຼາຍທຸລະກິດໃນWashingtonໃນປັດຈຸບັນໄດ້ຮັບແຮງຈູງໃຈສຳລັບຜູ້ທີ່ມີ**ຫຼັກຖານຢັ້ງຢືນການສັກຢາວັກຊີນຢ່າງຄົບຖ້ວນ**ເຊັ່ນ:ການຫຼຸດລາຄາ, ການໃຫ້ອະນຸຍາດ ຫຼື ມີບ່ອນນັ່ງຕາມໃຈມັກໃນງານຕ່າງໆ. ປົກປ້ອງບັດສັກຢາວັກຊີນຂອງທ່ານເພື່ອໃຫ້ທ່ານສາມາດໃຊ້ປະໂຫຍດຈາກຂໍ້ສະເໜີພິເສດເຫລົ່ານີ້.

ນີ້ແມ່ນຄຳແນະນຳທີ່ເປັນປະໂຫຍດທີ່ທ່ານຄວນຄຳນຶງເຖິງກ່ຽວກັບການຮັກສາບັດສັກຢາວັກຊີນຂອງທ່ານ:

- **ໃຫ້** ຮັກສາບັດສັກຢາວັກຊີນຂອງທ່ານໃນລະຫວ່າງບັນດາຄັ້ງໃນການສັກຢາ ແລະ ພາຍຫຼັງນັ້ນ.
- **ໃຫ້** ຖ່າຍຮູບດ້ານໜ້າ ແລະ ດ້ານຫຼັງບັດຂອງທ່ານເພື່ອໃຫ້ມີສຳເນົາດິຈິຕອນ. ພິຈາລະນາເອົາຮູບບັດສົ່ງເຂົ້າອີເມວທ່ານເອງ, ສ້າງເປັນອາລະບັ້ຮູບ ຫຼື ເອົາເກາະໃສ່ຮູບຖ່າຍເພື່ອໃຫ້ທ່ານສາມາດຊອກເຫັນໄດ້ງ່າຍຂຶ້ນ.
- **ໃຫ້** ຖ່າຍຮູບໄວ້ຖ້າທ່ານຕ້ອງການຖືອັນໜຶ່ງໄປນຳທ່ານ.

- **ຢ່າ** ເອົາໄປຖິ້ມ ຫຼື ເຮັດມັນເສຍ!
- **ຢ່າ** ໂພດສ ສະແດງຮູບບັດສັກຢາວັກຊີນຂອງທ່ານລົງໂລກອອນໄລນ໌. ແທນທີ່ຈະຖ່າຍໄວ້ ແລະ ໃຊ້**ສະຕິກເກີ ດິຈິຕອນ** ຂອງພວກເຮົາ (ພາສາອັງກິດເທົ່ານັ້ນ) ໂດຍການຄົ້ນຫາ #vaccinateWA ຫຼື #wadoh! ຈົ່ໄວ້ໃຫ້ເກາະໃສ່ @WADeptHealth.
- **ຢ່າ** ອັດແຂງບັດຕົ້ນສະບັບຂອງທ່ານ. ທ່ານອາດເລືອກທີ່ຈະອັດແຂງສະບັບສຳເນົາທີ່ຖືໄປນຳທ່ານ.

ຈະເກີດຫຍັງຂຶ້ນຖ້າທ່ານບໍ່ມີບັດສັກຢາວັກຊີນຂອງ Centers for Disease Control and Prevention(CDC, ສູນຄວບຄຸມ ແລະ ປ້ອງກັນພະຍາດ) ຂອງທ່ານ?

ຖ້າທ່ານເຮັດຜິດພາດ ຫຼື ເຮັດບັດຂອງທ່ານເສຍ, ຢ່າກັງວົນ! ທ່ານສາມາດໄດ້ຮັບຫຼັກຖານຢັ້ງຢືນຢ່າງເປັນທາງການກ່ຽວກັບການສັກຢາວັກຊີນປ້ອງກັນພະຍາດ ໂຄວິດ-19 ຂອງທ່ານໃນອອນໄລນ໌ໂດຍບໍ່ເສຍຄ່າ. ເວັບໄຊຂອງ MyIR ແມ່ນເວັບໄຊເປັນທາງການຂອງລັດທີ່ສາມາດເຂົ້າເບິ່ງຫຼັກຖານການສັກຢາວັກຊີນໃນລັດ Washington. ເພື່ອໃຫ້ໄດ້ຮັບສຳເນົາຂອງທ່ານ, ເຂົ້າເບິ່ງ www.MyIRMobile.com ຫຼື wa.MyIR.net ແລະ ລົງທະບຽນໂດຍບໍ່ເສຍຄ່າ. ຖ້າທ່ານໄດ້ລົງທະບຽນບັນຊີ MyIR ແລ້ວ, ທຸກຢ່າງຂອງທ່ານໄດ້ຕັ້ງຄ່າໄວ້ແລ້ວ.

* ກະລຸນາຈື່ໄວ້ວ່າການກວດສອບບັນທຶກຂອງທ່ານຜ່ານ MyIR ອາດຈະບໍ່ເປັນການດ່ວນ, ແລະ ການເຂົ້າເຖິງແມ່ນມີພຽງແຕ່ພາສາອັງກິດເທົ່ານັ້ນ.

ສຳລັບການຊ່ວຍເຫຼືອດ້ານພາສາ, ຫຼືຄວາມຊ່ວຍເຫຼືອເພີ່ມເຕີມເພື່ອໃຫ້ໄດ້ຮັບບັນທຶກຂອງທ່ານ, ທ່ານຍັງສາມາດໂທຫາລັດ Washington Office of Immunization and Child Profile (ຫ້ອງການສັກຢາປ້ອງກັນພະຍາດ ແລະ ຂໍ້ມູນເດັກນ້ອຍ) ໃນຊ່ວງເວລາເຮັດວຽກປົກກະຕິທີ່ 360-236-3595 ຫຼື ຕິດຕໍ່ທາງອີເມວທີ່ waiisrecords@doh.wa.gov.

Washington State Department of Health

DOH 348-809 May 2021 Lao

ເພື່ອຂໍເອົາເອກະສານນີ້ໃນຮູບແບບອື່ນ, ໃຫ້ໂທ 1-800-525-0127. ລູກຄ້າທີ່ຫູ ໜວກ ຫຼື ບໍ່ຄ່ອຍໄດ້ຍິນ, ກະລຸນາໂທ 711 (Washington Relay) ຫຼື ອີເມວ civil.rights@doh.wa.gov.